ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-=໑໐ ❖ ໐໑=-

ກະຊວງກະສິກຳ ແລະ ປ່າໄມ້ 

ກົມປ່າໄມ້ 

ເລກທີ 1643 /ກປມ.

ນະຄອນຫລວງວຽງຈັນ, ວັນທີ 17 JUN 2010

# ຂໍ້ແນະນຳ

## *ຂອງກົມປ່າໄມ້*

## *ກ່ຽວກັບການ ສ້າງບົດວິພາກ ເສດຖະກິດ - ເຕັກນິກ ການລົງທຶນປູກໄມ້ ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ*

- ອີງຕາມ ມາດຕາ 74 ຂອງກົດໝາຍປ່າໄມ້ ສະບັບ ເລກທີ 06/ສພຊ, ລົງວັນທີ 24/12/2007 ກ່ຽວກັບ ການເຊົ່າ ຫລື ສຳປະທານ ທີ່ດິນປ່າໄມ້.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0071/ກປ, ລົງວັນທີ 30 / 01 / 2009 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປ່າໄມ້.

ຫົວໜ້າກົມປ່າໄມ້ ອອກຂໍ້ແນະນຳ:

ຈຸດປະສົງ

1. ເພື່ອຜັນຂະຫຍາຍ ລະບຽບກົດໝາຍ ຂອງລັດ ກ່ຽວກັບ ການຄຸ້ມຄອງລົງທຶນ ປູກໄມ້ ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ມາເປັນ ຂໍ້ແນະນຳ ທາງດ້ານວິຊາການ ເພື່ອເປັນບ່ອນອີງ ໃຫ້ແກ່ ຜູ້ປະກອບການ ຊຶ່ງລວມມີ ນິຕິບຸກຄົນ, ການຈັດຕັ້ງ ແລະ ບໍລິສັດ ໃນການສ້າງ ບົດວິພາກ ເສດຖະກິດ - ເຕັກນິກ ການລົງທຶນ ປູກໄມ້ ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ;
2. ກຳນົດ ຫລັກການ ກ່ຽວກັບ ສ້າງບົດວິພາກ ເສດຖະກິດ-ເຕັກນິກ ການລົງທຶນ ປູກໄມ້ ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ;

II ລະດັບຄາດໝາຍ

1. ມີຫລັກການ ໃນການ ສ້າງ ວິພາກ ເສດຖະກິດ-ເຕັກນິກ ການລົງທຶນ ປູກໄມ້ ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ພ້ອມທັງຮັບປະກັນ ການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນສູງ;
2. ຮັບປະກັນ ການນຳໃຊ້ທີ່ດິນປ່າໄມ້ ໃຫ້ມີປະສິດທິຜົນ, ຮັບປະກັນການປະສິດທິຜົນການລົງທຶນ ແລະ ລຸດຜ່ອນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

III. ເນື້ອໃນ ແລະ ຂອບເຂດການນຳໃຊ້

ຂໍ້ແນະນຳສະບັບນີ້ ໄດ້ກຳນົດຫລັກການໃນສ້າງ ບົດວິພາກ ເສດຖະກິດ-ເຕັກນິກ ການລົງທຶນ ປູກໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ, ມີຂອບເຂດນຳໃຊ້ ສະເພາະ ລົງທຶນປູກໄມ້ ແລະ ເຄື່ອງປ່າຂອງດົງ ຊຶ່ງຜູ້ປະກອບການ ຊຶ່ງລວມມີນິຕິບຸກຄົນ, ການຈັດຕັ້ງ ແລະ ບໍລິສັດ ທີ່ມີຈຸດປະສົງ ເຊົ່າ ແລະ ສຳປະທານທີ່ດິນປ່າໄມ້ ຕາມ ມາດຕາ 74 ຂອງກົດໝາຍປ່າໄມ້ ສະບັບ ເລກທີ 06/ສພຊ, ລົງວັນທີ 24 / 12 / 2007.

IV. ຫລັກການ ການສ້າງບົດວິພາກ ເສດຖະກິດ - ເຕັກນິກ .

ການສ້າງບົດວິພາກເສດຖະກິດ - ເຕັກນິກ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ຜູ້ປະກອບການ ສະເໜີ ຂໍອະນຸຍາດ ການລົງທຶນ ລົງທຶນ ປູກໄມ້ ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ນຳກະຊວງແຜນການ;
2. ປະກອບຄຳຮ້ອງ ຂໍລົງທຶນ ຢູ່ ສປປ ລາວ ຕາມແບບຟອມຂອງ ກົມສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ;
3. ມີບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ບໍລິສັດສະເໜີ ຂໍລົງທຶນ ແລະ ລັດຖະບານ ແຫ່ງ ສປປ ລາວ;
4. ດຳເນີນການ ສຳຫລວດ ເພື່ອສຶກສາຂໍ້ມູນທາງດ້ານເສດຖະກິດ - ສັງຄົມ, ຄວາມເໝາະສົມທາງທຳມະຊາດ ເຊັ່ນ: ດິນ, ອາກາດ, ຄວາມສູງຈາກລະດັບນ້ຳທະເລ, ປະລິມານນ້ຳຝົນ, ແຫລ່ງນ້ຳ, ສິດນຳໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫລວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ອື່ນໆ ທີ່ຈຳເປັນ ຕາມລະບຽບການ ແລະ ຕາມເຕັກນິກ ທີ່ອົງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ກຳນົດອອກ;
5. ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກອົງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມ ຂໍ້ 2, ມາດຕາ 74 ຂອງກົດໝາຍປ່າໄມ້ ສະບັບ ເລກທີ 06/ສພຊ, ລົງວັນທີ 24 / 12 / 2007.

V. ເນື້ອໃນບົດ ວິພາກເສດຖະກິດ - ເຕັກນິກ

ເນື້ອໃນຕົ້ນຕໍ ຂອງບົດ ວິພາກເສດຖະກິດ - ເຕັກນິກ ຕ້ອງເນັ້ນໃສ່ ດັ່ງນີ້: 1) ກຳນົດລະອຽດ ກ່ຽວກັບເຕັກນິກ ວິຊາການ ກ່ຽວກັບການພັດທະນາ ສວນປູກໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ໂດຍເນັ້ນໃສ່ເຕັກນິກ ການປູກ, ການບົວລະບັດຮັກສາ, ການຈະເລີນເຕີບໂຕ ແລະ ຄວາມສ່ຽງ ອື່ນໆ ທີ່ອາດເກີດຂຶ້ນ. 2) ໃຫ້ຄິດໄລ່ ລະອຽດ ກ່ຽວກັບ ປະສິດຕິຜົນຂອງການລົງທຶນ, ການນຳໃຊ້ງົບປະມານເຂົ້າໃນການລົງທຶນ

(Investment costs), ຜົນໄດ້ຮັບ ຫລື ຜົນກຳໄລ. 3) ຄວາມສ່ຽງ ທີ່ ອາດເປັນສາຍເຫດ ທີ່ເຮັດໃຫ້ການລົງທຶນບໍ່ມີປະສິດທິຜົນ.

ເນື້ອໃນລະອຽດ ຂອງການຂຽນບົດວິພາກເສດຖະກິດ - ເຕັກນິກ ປະກອບມີ:

*ພາກທີ I . ສະພາບລວມ ຂອງໂຄງການ.*

ໃນພາກນີ້, ໃຫ້ ເນັ້ນໃສ່:

1. ແຜນງານ, ຊື່ຂອງໂຄງການ, ທີ່ຕັ້ງຂອງໂຄງການ ໂດຍສະແດງໃຫ້ເຫັນແຜນວາດເຂດພື້ນທີ່, ຊື່ເຈົ້າຂອງໂຄງການ, ຜູ້ທີ່ໄດ້ຮັບຜົນປະໂຫຍດ ໂດຍເນັ້ນໃສ່ ຜົນປະໂຫຍດທາງກົງຄື: ພາກລັດ ຈະໄດ້ຜົນປະໂຫຍດຫຍັງ, ປະຊາຊົນ ທີ່ດຳລົງຊີວິດ ໃນເຂດ ຫລື ໄກ້ກັບເຂດພັດທະນາໂຄງການ ຈະມີຜົນໄດ້ຮັບຈາກໂຄງການແນວໃດ ແລະ ຜູ້ລົງທຶນ ຈະໄດ້ ຮັບຜົນປະໂຫຍດຫຍັງແດ່. ນອກນັ້ນ ຈະຕ້ອງໄດ້ລະບຸກ່ຽວກັບຜົນປະໂຫຍດທາງອ້ອມ ໂດຍສະເພາະ ແມ່ນ ການປົກປັກຮັກສາສິ່ງແວດລ້ອມ ແລະ ອື່ນໆ.
2. ສະພາບຄວາມເປັນ ແລະ ສະພາບພື້ນທີ່

   ສະພາບຄວາມເປັນມາ ແລະ ສະພາບພື້ນທີ່ ໃຫ້ອະທິບາຍກ່ຽວກັບ ພູມີປະເທດເປັນຕົ້ນ ສະພາບທີ່ດິນ, ອາກາດ, ຄວາມສູງຈາກລະດັບນ້ຳທະເລ, ປະລິມານນ້ຳຝົນ, ແຫລ່ງນ້ຳ. ສະພາບປ່າໄມ້ ແລະ ທີ່ດິນປ່າໄມ້, ສະພາບສັດນ້ຳ ແລະ ສັດປ່າ ໂດຍສະເພາະ ສັດນ້ຳ ແລະ ສັດປ່າ ທີ່ນອນໃນບັນຊີ ຫວງຫ້າມ ຂອງລັດຖະບານ ຕາມມະຕິຕົກລົງຂອງ ນາຍົກລັດຖະມົນຕີ ສະບັບເລກທີ 81/ນຍ, ລົງວັນທີ 13 / 08 / 2008.
3. ສະພາບດ້ານເສດຖະກິດ - ສັງຄົມ ໃຫ້ເນັ້ນໃສ່ ສະພາບການນຳໃຊ້ດິນ, ອາຊີບຫລັກຂອງປະຊາຊົນ, ສະພາບພື້ນຖານໂຄງລ່າງ ( ຄົມມະນາຄົມ, ສາທາລະນະສຸກ, ການສຶກສາ ).
4. ບັນຫາ ແລະ ທ່າແຮງ ໃຫ້ເນັ້ນໃສ່:
   - ດ້ານນິເວດວິທະຍາ ;
   - ເງື່ອນໄຂທຳມະຊາດ (ສະພາບປ່າໄມ້ - ທີ່ດິນປ່າໄມ້) ຄັດຕິດບົດລາຍງານຜົນສຳຫລວດເນື້ອທີ່ໆໄດ້ຜ່ານການຮັບຮອງແລ້ວ ;
   - ພົນລະເມືອງ ແລະ ແຮງງານ ;
   - ເງື່ອນໄຂເສດຖະກິດຂອງໂລກ, ພາກພື້ນ ແລະ ສາກົນ.
   - ອື່ນໆ

*ພາກທີ II . ຈຸດປະສົງຂອງການລົງທຶນ ແລະ ລະດັບຄາດໝາຍ*

1. ຈຸດປະສົງ
2. ແຜນການລົງທຶນ
3. ສະພາບການຕະລາດ
4. ລະດັບຄາດໝາຍ

*ພາກທີ III . ບັນດາເອກະສານອ້າງອີງທາງດ້ານນິຕິກຳ, ກົດໝາຍ*

1. ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ທີ່ເປັນບ່ອນອີງ;
2. ບັນດາເອກະສານອະນຸຍາດໃຫ້ລົງທຶນຜ່ານມາ (ຖ້າມີ).

*ພາກທີ IV . ການພັດທະນາໂຄງການ (ການດຳເນີນໂຄງການ)*

1. *ສັງເກດຕີລາຄາລວມ*

1.1 ຮູບແບບການລົງທຶນ.

- ການຄັດເລືອກຂະໜາດໂຄງການ
- ຄາດຄະເນການລົງທຶນ, ໃນນັ້ນມີ ທຶນຄົງທີ່, ທຶນໝູນວຽນ ແລະ ທຶນຈົດທະບຽນ
- ແຫລ່ງທີ່ມາຂອງທຶນ ໃຫ້ເນັ້ນໃສ່ ແຫ່ລງທຶນເຈົ້າຂອງເອງ, ແຫ່ລງທຶນຈາກການລະດົມຫຸ້ນ ແລະ ແຫລ່ງທຶນຈາກການກູ້ຢືມ.

1.2 ການຄິດໄລ່ງົບປະມານ

- ຄ່າໃຊ້ຈ່າຍຕົ້ນທຶນໝູນວຽນ
  - ເງິນເດືອນ, ເບ້ຍລ້ຽງ, ອຸດໜູນ ແລະ ຄ່າແຮງງານອື່ນໆຕາມສັນຍາ (ໃຫ້ຄິດໄລ່ລະອຽດ ແລ້ວຄັດຕິດເປັນບົດແນບທ້າຍ)
  - ການຄິດໄລ່ ເສຍພາສີອາກອນຕ່າງໆ(ໃຫ້ຄິດໄລ່ລະອຽດ ແລ້ວຄັດຕິດເປັນບົດແນບທ້າຍ)
  - ຄ່າບຸກເບີກ ແລະ ກຽມດິນ (ໃຫ້ຄິດໄລ່ລະອຽດຄັດຕິດເປັນບົດ ແນບທ້າຍ)
- ຄ່າໃຊ້ຈ່າຍຕົ້ນທຶນຄົງທີ່
  - ປຸກສ້າງສຳນັກງານ, ຫ້ອງການ, ບ້ານພັກ, ພາຫານະຮັບໃຊ້ ແລະ ເຄື່ອງໃຊ້ທີ່ຈຳເປັນໃນສຳນັກງານ (ໃຫ້ຄິດໄລ່ລະອຽດເຖິງຈຳນວນ, ແລ້ວຄັດຕິດເປັນບົດ ແນບທ້າຍ).

1.3 ຮູບແບບການຄຸ້ມຄອງໂຄງການ :

- ໂຄງຮ່າງການຈັດຕັ້ງຂອງໂຄງການ (ໃຫ້ອະທິບາຍລະອຽດກ່ຽວກັບໜ້າທີ່ຮັບຜິດ ຊອບຂອງແຕ່ລະໜ່ວຍງານ)
- ກົດລະບຽບຂອງໂຄງການ (ໃຫ້ຂຽນອອກລະອຽດແລ້ວຄັດຕິດມາຕາງຫາກເປັນເອກະສານແນບທ້າຍ)

1.4 ການພັດທະນາສວນປູກ (ສະເໜີໃຫ້ຄັດຕິດຜົນການສຳຫລວດທີ່ດິນມາພ້ອມ)

- ຈຸດພິເສດ ແລະ ຄວາມເປັນມາ (ອະທິບາຍກ່ຽວກັບປະຫວັດຄວາມເປັນມາຂອງຕົ້ນໄມ້, ພືດ ຫລື ອື່ນໆ ທີ່ຈະດຳເນີນທຸລະກິດ)

  <u>ຍົກຕົວຢ່າງ</u> : (ຢາງພາລາ, ໄມ້ເກດສະໜາ ແລະ ອື່ນໆ)

  - ເຊື້ອຕະກຸນ
  - ຄຸນປະໂຫຍດ
  - ລັກສະນະທາງດ້ານເຕັກນິກ-ວິທະຍາສາດ (ສັງລວມໂດຍສັງເຂບເອົາຈຸດເດັ່ນໆຂຶ້ນມາ).

- ວິທີການກ້າເບ້ຍ
  - ທີ່ມາຂອງແກ່ນເມັດພັນ, ການສວນກ້າເບ້ຍ ແລະ ອື່ນໆ
- ວິທີການກຽມດິນ ແລະ ການປູກ
  - ຂັ້ນຕອນຂອງການກຽມດິນ
  - ຫລັກການຂອງການປູກ
- ການດູແລຮັກສາ (ໃຫ້ອະທິບາຍລະອຽດໃນແຕ່ລະໄລຍະແຕ່ 1 ເດືອນ ຫາ 1ປີ, ແຕ່ 1 ປີ ຈົນຮອດໄລຍະຫວັງຜົນ)
- ໄລຍະການເກັບກູ້ຜົນປະໂຫຍດ (ໃຫ້ອະທິບາຍຄາດຄະເນລະອຽດກ່ຽວກັບການໃຫ້ຜົນຜະລິດໃນແຕ່ລະປີທີ່ຈະໄດ້ຮັບ).
  - ສ້າງຕາຕະລາງສັງລວມຄາດຄະເນຜົນທີ່ໄດ້ຮັບໃນແຕ່ລະປີ

1.5 ສັງລວມຄາດຄະເນແຜນການນຳໃຊ້ເງິນເຂົ້າໃນໂຄງການ
  - ສ້າງຕາຕະລາງສັງລວມຄາດຄະເນການໃຊ້ຈ່າຍໃນແຕ່ລະປີ

1.6 ສະຫລຸບໂດຍຫຍໍ້ຄາດຄະເນຜົນໄດ້ຮັບຈາກໂຄງການ.
- ມູນຄ່າຂອງການລົງທຶນທັງໝົດຂອງໂຄງການ ;
- ເນື້ອທີ່ປູກ(ທຳການຜະລິດ)ທັງໝົດ ;
- ໄລຍະສຳປະທານໂຄງການ ;
- ຕົ້ນທຶນໄລຍະການປູກສະເລ່ຍປະມານ/ເຮັກຕາ ;
- ຄາດຄະເນລາຍຮັບທັງໝົດຮອດປີສຸດທ້າຍ ;
- ຜົນຕອບແທນໂຄງການທີ່ໄດ້ຮັບຈາກການລົງທຶນ ;
- ກຳໄລສຸດທິຂອງໂຄງການ ;
- ລາຍຮັບຂອງລັດຖະບານຈາກໂຄງການ ;
  - ຈາກພາສີທີ່ດິນທັງໝົດ
  - ຈາກພາສີອາກອນລາຍໄດ້

2. *ແຜນການໃນໄລຍະດຳເນີນໂຄງການ*
- ແຜນການປູກໃນແຕ່ລະປີ (ສ້າງເປັນຕາຕະລາງລະອຽດ)
- ການປ້ອງກັນສິ່ງແວດລ້ອມ - ສັງຄົມ ແລະ ມາດຕະການປົກປັກຮັກສາ
- ການປະກອບສ່ວນພັດທະນາກໍ່ສ້າງພື້ນຖານໂຄງລ່າງ ໃນເຂດໂຄງການໃຫ້ແກ່ທ້ອງຖິ່ນ
  - ສ້າງເປັນຕາຕະລາງແຜນການລະອຽດໃນແຕ່ລະປີ (ແຜນວຽກ, ແຜນເງິນ)
- ການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ
  - ລາຍງານປົກກະຕິ, ປະຈຳ 3 ເດືອນ, ປະຈຳງວດ, ປະຈຳປີ ໃຫ້ແກ່ຂະແໜງການທີ່ກ່ຽວ ຂ້ອງຂັ້ນແຂວງ ທີ່ໂຄງການດຳເນີນຢູ່ ແລະ ລາຍງານປະຈຳປີ ໃຫ້ກະຊວງກະສິກຳ ແລະ ປ່າໄມ້.
- ແຜນການລົງຊຸກຍູ້, ກວດກາ - ຕິດຕາມ ຂອງພະນັກງານລັດທີ່ກ່ຽວຂ້ອງ ຂັ້ນແຂວງ, ຂັ້ນສູນກາງ
  - ສ້າງເປັນຕາຕະລາງລະອຽດລັດຕິດ(ກຳນົດເວລາ, ແຜນຄົນ, ແຜນເງິນ)

❖ *ບົດແບບຫາຍ*

ໃຫ້ແນໃສ່ກວດກາເອກກະສານ ປະກອບໃນບົດວິພາກ ເສດຖະກິດເຕັກນິກ ເປັນຕົ້ນແມ່ນ:

1. ແຜນວາດສະແດງຂອບເຂດພື້ນທີ່.
2. ຄຸນນະພາບຂອງດິນ, ນ້ຳ, ອາກາດ ແລະ ບົດລາຍງານຜົນຂອງການສຳຫລວດເນື້ອ.
3. ຕາຕະລາງການຄິດໄລ່ການໃຊ້ຈ່າຍຕົ້ນທຶນໝູນວຽນ.
   - ເງິນເດືອນ, ເງິນແຮງງານຕ່າງໆ
   - ຄິດໄລ່ຄ່າຄ່າໃຊ້ຈ່າຍພັນທະພາສີ, ອາກອນຕ່າງໆ.
   - ຄິດໄລ່ຄ່າໃຊ້ຈ່າຍການບຸກເບີກ ແລະ ກະກຽມດິນ.
4. ຕາຕະລາງຄິດໄລ່ຄ່າໃຊ້ຈ່າຍຕົ້ນທຶນ.
   - ຄິດໄລ່ການປຸກສ້າງ.
   - ພາຫະນະຮັບໃຊ້.
   - ອຸປະກອນຮັບໃຊ້
5. ກົດລະບຽບໂຄງການ
6. ຕາຕະລາງຄິດໄລ່ຄາດຄະເນຜົນໄດ້ຮັບ
7. ຕາຕະລາງຄິດໄລ່ແຜນການປູກ
8. ສັງລວມຕາຕະລາງຄິດໄລ່ແຜນວຽກ,ແຜນເງິນ ທັງໝົດ
9. ຕາຕະລາງແຜນການລົງຊຸກຍູ້, ກຳນົດເວລາ, ແຜນເງິນ, ແຜນຄົນ.

*5.1 ການກວດກາພາກສະໜາມ*

ຖ້າ ຫາກສະພາບພື້ນທີ່ ຂອງໂຄງການຍັງບໍ່ທັນຈະແຈ້ງ, ຄະນະວິຊາການ ຈາກກົມປ່າໄມ້ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ ຈະຕ້ອງລົງກວດກາ ສະພາບພື້ນທີ່ຕົວຈິງ.

## VI. ການຕີລາຄາ ບົດວິພາກເສດຖະກິດ - ເຕັກນິກ

ການຕີລາຄາ ບົດວິພາກເສດຖະກິດ - ເຕັກນິກ ຈະຕ້ອງໄດ້ດຳເນີນ ຕາມມາດຖານທີ່ກຳນົດໄວ້, ຖ້າຫາກການຄາດຄະເນຜົນໄດ້ຮັບຈາກການ ລົງທຶນດັ່ງກ່າວ ບໍ່ສາມາດຮັບປະກັນໄດ້ ຫລື ວ່າມີຄວາມສ່ຽງສູງ ຕໍ່ຜົນທີ່ໄດ້ຮັບ, ຄະນະວິຊາການ ກົມປ່າໄມ້ ຈະບໍ່ຮັບຮອງເອົາບົດວິພາກເສດຖະກິດ - ເຕັກນິກດັ່ງກ່າວ. ອາດຈະສະເໜີໃຫ້ບໍລິສັດ ດຳເນີນການຄົ້ນຄວ້າ ທົດລອງ ໃນເຂດໃດໜຶ່ງສາກ່ອນ.

## VII ບົດແນະນຳ ສະບັບນີ້ ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ກົມປ່າໄມ້

ດຣ ສີລາວັນ ສະຫວາດວົງ